# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee

I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ........ 1

II. ການເຄື່ອນໄຫວຂອງ ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ ........ 6

**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ເດືອນ ສິງຫາ 2024**

**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 3/8/2024, ກອງປະຊຸມຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ລົງມະຕິເລືອກເອົາ ສະຫາຍ ໂຕເລີມ, ກໍາມະການກົມການເມືອງ, ປະທານປະເທດ ແຫ່ງ ສສ ຫວຽດນາມ ເປັນ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສະໄໝທີ XIII ແທນ ສະຫາຍ ຫງວຽນຟູ້ຈ້ອງ ທີ່ເສຍຊີວິດ ໃນວັນທີ 19/07/2024 ຜ່ານມາ. ໃນໂອກາດດັ່ງກ່າວ, ສະຫາຍ ໂຕເລີມ ໄດ້ກ່າວວ່າ: ຈະສືບທອດ ແລະ ເຊີດຊູ ບັນດາຜົນງານການປະຕິວັດ ຂອງສະຫາຍ ຫງວຽນຟູ້ຈ້ອງ ແລະ ການນໍາຮຸ່ນກ່ອນ ສ້າງຂຶ້ນ; ຈະເຊີດຊູຄວາມ ສາມັກຄີ, ເປັນເອກະພາບກັບຄະນະບໍລິຫານງານສູນກາງພັກ, ກົມການເມືອງ, ຄະນະເລຂາທິການ ເພື່ອຊີ້ນໍານໍາພາ ທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບ ປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ ຄັ້ງທີ 13 ໄດ້ວາງ ອອກໃຫ້ປະສົບຜົນສໍາເລັດຕາມຄາດໝາຍ.

ວັນທີ 15 ສິງຫາ 2024, ສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມພົບປະບັນດາການນໍາ, ອະດີດການນໍາ ຂອງພັກ ແລະ ລັດ; ໄດ້ປຶກສາຫາລື ກ່ຽວກັບໄພຄຸກຄາມຕໍ່ການນໍາພາຂອງພັກ ແລະ ລະບອບສັງຄົມ ນິຍົມຢູ່ຫວຽດນາມ, ໂດຍສະເພາະການແຂ່ງຂັນຍຸດທະສາດລະຫວ່າງບັນດາປະເທດໃຫຍ່ໃນພາກພື້ນອາຊີ-ປາຊີຟິກ ທີ່ນັບມື້ສະແດງອອກຢ່າງຈະແຈ້ງ; ຄວາມສ່ຽງການປະທະກັນ ໃນແຫຼມເກົາຫຼີ, ຊ່ອງແຄບໄຕ້ຫວັນ, ທະເລຈີນໃຕ້, ຊຶ່ງເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ຫວຽດນາມ ເພື່ອຮັກສາດຸ່ນດ່ຽງໃນການພົວພັນກັບບັນດາປະເທດໃຫຍ່; ກອງ ປະຊຸມຍັງໄດ້ປຶກສາຫາລືວຽກງານການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ 13 ຂອງພັກ ແລະ ກະກຽມໃຫ້ ກອງປະຊຸມໃຫຍ່ຄັ້ງທີ 14ຂອງພັກ; ໄດ້ເນັ້ນໜັກໃຫ້ການນໍາທຸກຂັ້ນເອົາໃຈໃສ່ 4 ວຽກງານສໍາຄັນຕົ້ນຕໍຄື: 1). ເອົາໃຈໃສ່ຊີ້ນໍາ-ນໍາພາ ໃຫ້ມີບາດກ້າວບຸກທະລຸ, ເລັ່ງລັດໃຫ້ສໍາເລັດຕາມຄາດໝາຍສູ້ຊົນ ແລະ ມະຕິກອງປະຊຸມ ໃຫຍ່ຄັ້ງທີ 13 ຂອງພັກ; 2).ລົບລ້າງຄວາມຫຍຸ້ງຍາກດ້ານລະບອບລະບຽບຂອງອົງກອນ; 3).ສຸມໃສ່ປະຕິບັດ ນະໂຍບາຍປະກັນສັງຄົມ, ປັບປຸງຊີວິດທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ; 4).ສືບຕໍ່ເດັດດ່ຽວຕ້ານການສໍ້ ລາດບັງຫຼວງ ແລະ ປະກົດການຫຍໍ້ທໍ້.

ວັນທີ 21/8/2024, ສູນກາງພັກກອມມູນິດຫວຽດນາມ ໄດ້ເປີດກອງປະຊຸມ ຄັ້ງທີ 2 ຂອງອະນຸກໍາມະການ ບຸກຄະລາກອນ ເພື່ອກະກຽມໃຫ້ແກ່ກອງປະຊຸມໃຫຍ່ ຄັ້ງທີ 14 ຂອງພັກ ໂດຍການເປັນປະທານຂອງ ສະຫາຍ ໂຕ ເລີ່ມ (To Lam), ເລຂາທິການໃຫຍ່, ປະທານປະເທດຫວຽດນາມ, ຫົວໜ້າອະນຸກໍາມະການບຸກຄະລາກອນຂອງ ກອງປະຊຸມໃຫຍ່ຄັ້ງທີ 14 ຂອງພັກ. ກອງປະຊຸມໄດ້ປະກອບຄໍາຄິດຄໍາເຫັນໃສ່ຮ່າງ: ບົດລາຍງານສະຫຼຸບບຸກຄະລາ ກອນຂອງຄະນະບໍລິຫານງານສູນກາງພັກຊຸດທີ 13 ແລະ ທິດທາງວຽກງານບຸກຄະລາກອນຂອງຄະນະບໍລິຫານງານ ສູນກາງພັກຊຸດທີ 14 ເພື່ອຍື່ນສະເໜີຕໍ່ກົມການເມືອງ. ສະຫາຍ ໂຕ ເລີ່ມ (To Lam) ກ່າວວ່າ: ວຽກງານບຸກຄະລາ ກອນເປັນວຽກງານສໍາຄັນ ຕິດພັນກັບຊາຕາກໍາຂອງພັກການພັດທະນາ ແລະ ກໍາລັງແຮງຂອງຊາດ. ສະນັ້ນ, ໃຫ້ເອົາ ໃຈໃສ່ຢ່າງເລິກເຊິ່ງ ໃນວຽກການກະກຽມບຸກຄະລາກອນໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີ 14 ຂອງພັກ ໃຫ້ຮັບປະກັນ ຄຸນນະພາບເພື່ອ ສືບທອດອຸດົມການ ແລະ ທິດທາງລວມ ແລະ ສະເພາະຂອງສະຫາຍ ຫງວຽນຟູ້ຈ້ອງ, ອະດີດ ເລຂາທິການໃຫຍ່.

### 2) ພັກກອມມູນິດຈີນ

ວັນທີ 30/7/2024, ຄະນະກໍາມະການກົມການເມືອງສູນກາງພັກກອມມູນິດຈີນ ໄດ້ຈັດກອງປະຊຸມ ຮໍ່າຮຽນລວມໝູ່ ຄັ້ງທີ 16 ກ່ຽວກັບ “ການຊຸກຍູ້ການກໍ່ສ້າງກໍາລັງປ້ອງກັນຊາຍແດນ, ທະເລ ແລະ ນ່ານຟ້າ ທີ່ທັນ

ສະໄໝ". ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່ ໄດ້ກ່າວວ່າ: ການຊຸກຍູ້ການກໍ່ສ້າງກຳລັງປ້ອງກັນຊາຍແດນ, ທະເລ ແລະ ນ່ານຟ້າ ທີ່ທັນສະໄໝ ເປັນຄວາມຮຽກຮ້ອງຕ້ອງການພາຍໃນ ຂອງການຫັນເປັນທັນສະໄໝ ຂອງການປ້ອງກັນປະເທດ ແລະ ກອງທັບ, ຮັບປະກັນການພັດທະນາໃນຄຸນນະພາບ ດ້ວຍຄວາມໝັ້ນຄົງໃນລະດັບສູງ; ຍຶດໝັ້ນແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ເປັນທິດຊີ້ນຳ,ຖືເອົາສະພາບລວມທາງຍຸດທະສາດຄວາມໝັ້ນຄົງແຫ່ງຊາດ ແລະ ຍຸດທະສາດການທະຫານເປັນຈຸດຢືນ, ກຳໄດ້ສະພາບການໃໝ່, ຈຸດພິເສດໃໝ່ ແລະ ຄວາມຮຽກຮ້ອງຕ້ອງການໃໝ່ຂອງການປ້ອງກັນຊາຍແດນ, ທະເລ ແລະ ນ່ານຟ້າ, ເພີ່ມທະວີຄວາມຮັບຜິດຊອບດ້ານພາລະໜ້າທີ່ຂອງຕົນ, ປະດິດສ້າງໃໝ່ດ້ານແນວຄິດ, ມາດຕະການ, ໝັ້ນຄົງ ແລະ ທັນສະໄໝ.

ວັນທີ 19/8/2024, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກຄອມມູນິດຈີນ ປະທານປະເທດຈີນ ໄດ້ພົບປະກັບສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກຄອມມູນິດຫວຽດນາມ, ປະທານປະເທດຫວຽດນາມ ທີ່ນະຄອນຫຼວງປັກກິ່ງ ໃນໂອກາດທີ່ຢ້ຽມຢາມຈີນຢ່າງເປັນທາງການ ໃນລະຫວ່າງວັນທີ 18-20/8/2024. ສອງຝ່າຍຍິນດີສ້າງສາຍພົວພັນການເຮັດວຽກທີ່ດີ, ຮ່ວມກັນສ້າງຄູ່ຮ່ວມຊະຕາກຳຈີນ-ຫວຽດນາມ ໃຫ້ລົງສູ່ລວງເລິກ; ສອງພັກກອມມູນິດຈີນ ແລະ ຫວຽດນາມ ເຫັນດີສືບທອດມິດຕະພາບອັນເປັນມູນເຊື້ອ, ຍຶດໝັ້ນອຸດົມການຂອງພັກກອມມູນິດ ແລະ ລະບອບສັງຄົມນິຍົມ; ຮ່ວມກັນຊຸກຍູ້ການພັດທະນາພາລະກິດສັງຄົມນິຍົມຂອງໂລກ. ໃນໂອກາດດັ່ງກ່າວ, ສອງຝ່າຍ ໄດ້ລົງນາມເອກະສານ 14 ສະບັບ, ໃນນັ້ນ ມີເອກະສານກ່ຽວກັບການວາງແຜນ ແລະ ສຶກສາຄວາມເປັນໄປໄດ້ຂອງເສັ້ນທາງລົດໄຟທີ່ໄດ້ມາດຕະຖານ ເພື່ອຍົກລະດັບຂອງການເຊື່ອມຕໍ່ເສັ້ນທາງລົດໄຟຂ້າມຊາຍແດນລະຫວ່າງຈີນ-ຫວຽດນາມ ຜ່ານໜ່ວຍພູ ລາວກາຍ ທີ່ຕັ້ງຢູ່ທາງພາກຕາເວັນຕົກສຽງເໜືອຂອງຫວຽດນາມຫາເມືອງທ່າກຳປັ່ນ ຮາຍຟອງ (Haiphong) ແລະ ໂຄງການເຊື່ອມຕໍ່ຈາກເມືອງ ເສິນເຈິນ (Shenzhen) ກັບ ເມືອງທ່າ ຮາຍຟອງ ຂອງຫວຽດນາມ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

- **ແຫຼມເກົາຫຼີ**: ວັນທີ 19-29/08/2024, ສ. ເກົາຫຼີ ແລະ ອາເມຣິກາ ໄດ້ຝຶກຊ້ອມຮົບຮ່ວມກັນ ໃນດິນແດນ ສ. ເກົາຫຼີ, ຂະນະທີ່ ມີນັກເຄື່ອນໄຫວ ສ. ເກົາຫຼີ ໄດ້ລວມຕົວປະທ້ວງຢູ່ໃກ້ສຳນັກງານປະທານາທິບໍດີ ສ. ເກົາຫຼີ ຖືປ້າຍ: "ຢຸດການຊ້ອມຮົບທີ່ກະຕຸ້ນໃຫ້ເກີດການສົງຄາມແລະ ການປະເຊີນໜ້າດ້ານນິວເຄລຍ". ສ່ວນ ສປປ ເກົາຫຼີ ໄດ້ປະນາມວ່າເປັນການຝຶກຊ້ອມຮົບຂະໜາດໃຫຍ່ ເພື່ອກະກຽມຮຸກຮານ ສປປ ເກົາຫຼີ.
- **ການເມືອງໄທ** : ວັນທີ 7/8/2024, ສານລັດຖະທຳມະນູນໄທ ຕັດສິນ ຍຸບພັກກ້າວໄກ ແລະ ຫ້າມບໍ່ໃຫ້ ຄະນະກຳມະການບໍລິຫານພັກທັງໝົດ 11 ທ່ານ ລົງຫຼິ້ນການເມືອງເປັນເວລາ 10 ປີ ເນື່ອງຈາກພວກກ່ຽວມີພຶດຕິກຳຢາກລົບລ້າງ ແລະ ເປັນປໍລະປັກກັບລະບອບການປົກຄອງປະຊາທິປະໄຕອັນມີມະຫາກະສັດເປັນປະມຸກລັດ. ພາຍຫຼັງພັກກ້າວໄກຖືກຍຸບ, ສະມາຊິກພັກດັ່ງກ່າວ ໄດ້ສ້າງຕັ້ງພັກໃໝ່ ໂດຍໃສ່ຊື່ວ່າ: ພັກປະຊາຊົນ ໂດຍມີ ທ່ານ ນັດທະພົງ ເຮືອງປັນຍາວຸດ, ເປັນຫົວໜ້າພັກ. ວັນທີ 14/8/2024, ສານລັດຖະທຳມະນູນຂອງໄທ ໄດ້ຕັດສິນປົດ ທ່ານ ເສດຖາ ທະວີສິນ ອອກຈາກຕຳແໜ່ງນາຍົກລັດຖະມົນຕີໄທ, ຍ້ອນການກະທຳຜິດດ້ານຈັນຍາບັນ ໂດຍການແຕ່ງຕັ້ງ ທ່ານ ພິຊິດ ຊື່ນບານ ທີ່ເຄີຍຕິດຄຸກໃນຂໍ້ຫາໝິ່ນປະໝາດສານ ເປັນລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຕາມກົດໝາຍໄທ ຜູ້ກະທຳຜິດບໍ່ເຄົາລົບໝິ່ນປະໝາດສານຈະບໍ່ມີຄຸນສົມບັດໃນການດຳລົງຕຳແໜ່ງທາງການເມືອງໃດໆ. ການຕັດສິນດັ່ງກ່າວເຮັດໃຫ້ຄະນະລັດຖະບານທັງໝົດ ຕ້ອງສິ້ນສຸດການປະຕິບັດໜ້າທີ່ໄປນຳກັນ, ແຕ່ສະມາຊິກລັດ

ຖະບານ ຍັງຈະສືບຕໍ່ປະຕິບັດໜ້າທີ່ຮັກສາການຈົນກວ່າຈະຈັດຕັ້ງຄະນະລັດຖະບານຊຸດໃໝ່. ໃນວັນທີ 16/8/2024, ສະພາຜູ້ແທນຣາຊະດອນໄທ ໄດ້ເປີດກອງປະຊຸມວິສາມັນ ເລືອກເອົາ ທ່ານ ນາງ ແພທອງທານ ຊິນນະວັດ, ເປັນນາຍົກລັດຖະມົນຕີຄົນໃໝ່ ດ້ວຍຄະແນນສຽງເຫັນດີ 319 ສຽງ, ບໍ່ເຫັນດີ 145 ສຽງ ແລະ ງົດອອກສຽງ 27 ສຽງ. ຈາກນັ້ນ, ປະທານສະພາໄດ້ນໍາສະເໜີຊື່ນາຍົກຄົນໃໝ່ຕໍ່ເຈົ້າຊີວິດ ແລະ ໄດ້ຈັດພິທີການແຕ່ງຕັ້ງນາຍົກລັດຖະມົນຕີຢ່າງເປັນທາງການໃນວັນທີ 18/8/2024.

- **ສະພາບການໃນບັງກລາເທດ**: ພາຍຫຼັງການປະທ້ວງຢ່າງຮຸນແຮງຂອງນັກສຶກສາ ບັງກລາເທດ ແຕ່ຕົ້ນເດືອນ 7/2024 ເປັນຕົ້ນມາ ຕໍ່ການສະເໜີປັບປຸງໂກຕາລັດຖະກອນຂອງສະພາ, ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 300 ຄົນ, ບາດເຈັບ ແລະ ຖືກຈັບຫຼາຍພັນຄົນ. ວັນທີ 5/8/2024, ທ່ານ ນາງ Sheikh Hashina, ນາຍົກລັດຖະມົນຕີ ໄດ້ລາອອກຈາກຕໍາແໜ່ງ ແລະ ລົບໜີໄປລີ້ໄພຢູ່ປະເທດອິນເດຍ. ປະທານາທິບໍດີບັງກລາເທດ ໄດ້ປະກາດຍຸບສະພາ ໃນວັນທີ 7/8/2024. ປັດຈຸບັນ ທະຫານ ນໍາໂດຍທ່ານ ນາຍພົນ Waker-Uz-Zaman, ຜູ້ບັນຊາການທະຫານສູງສຸດໄດ້ເຂົ້າມາຄວບຄຸມສະຖານະການ ແລະ ມີແຜນຈັດຕັ້ງຄະນະລັດຖະບານສະເພາະກິດ ເພື່ອສ້າງຄວາມເປັນເອກະພາບໃນທົ່ວປະເທດໃນຕໍ່ໜ້າ.

### 2) ສະພາບການຂົງເຂດເອີຣົບ-ອາເມຣິກາ

- **ການແລກປ່ຽນນັກໂທດ**: : ວັນທີ 1/8/2024, ມີ 6 ປະເທດ: ຣັດເຊຍ, ອາເມຣິກາ, ເຢຍລະມັນ, ສະໂລເວນີ, ນອກແວ ແລະ ເບລາຣຸດຊີ ໄດ້ແລກປ່ຽນນັກໂທດ ລວມທັງໝົດ 26 ຄົນ. ຣັດເຊຍ ໃຫ້ອິດສະຫຼະ 16 ຄົນ ໃນນັ້ນມີນັກໂທດອາເມຣິກາ 4 ຄົນ, ເຢຍລະມັນ 5 ຄົນ ແລະ ນັກໂທດການເມືອງຄົນຣັດເຊຍ 7 ຄົນ; ເຢຍລະມັນ ປ່ອຍນັກໂທດຣັດເຊຍ 6 ຄົນ ໃນນັ້ນມີທ່ານ Vadim Krasikov, ເຈົ້າໜ້າທີ່ຂ່າວລັບ FSB ຂອງຣັດເຊຍ ຖືກຈັບໃນຂໍ້ຫາການຄາດຕະກໍາ ທ່ານ Zelimjan Jangoshvili, ອະດີດຜູ້ບັນຊາການຂອງຊາວ Chechenia ທີ່ໄດ້ຕໍ່ຕ້ານລັດຖະບານຣັດເຊຍ. ອາເມຣິກາ ປ່ອຍນັກໂທດຣັດເຊຍ 1 ຄົນ ຄື: ທ່ານ Roman Seleznev, ຖືກຈັບໃນຂໍ້ຫາໂຈລະກໍາຂໍ້ມູນບັດເຄຣດິດອາເມຣິກາ ເຮັດໃຫ້ເກີດຄວາມເສຍຫາຍ 169 ລ້ານໂດລາ, ເປັນລູກຂອງສະມາຊິກລັດຖະສະພາ ທີ່ມີຄວາມໃກ້ຊິດກັບ ທ່ານ ປູຕິນ; ນັກໂທດ ອີກ 3 ຄົນ ແມ່ນຖືກປ່ອຍເປັນອິດສະຫຼະພາບຈາກສະໂລເວນີ, ນອກແວ ແລະ ເບລາຣຸດຊີ. ການແລກປ່ຽນນັກໂທດຄັ້ງນີ້ ເປັນຄັ້ງສໍາຄັນໃນປະຫວັດສາດ ນັບແຕ່ໄລຍະສົງຄາມເຢັນເປັນຕົ້ນມາ ທ່ານ ປູຕິນ ພ້ອມດ້ວຍການນໍາຂັ້ນສູງຣັດເຊຍ ໄດ້ຕ້ອນຮັບນັກໂທດຂອງຕົນທີ່ເດີນທາງມາຈາກອາເມຣິກາ ແລະ ເຢຍລະມັນ. ສ່ວນ ທ່ານ Joe Biden, ປະທານາທິບໍດີ ອາເມຣິກາ ກໍໄດ້ຕ້ອນຮັບນັກໂທດຂອງຕົນກັບຄືນປະເທດ.

- **ຂໍ້ຂັດແຍ່ງອູແກຣນ-ຣັດເຊຍ:** ໃນວັນທີ 7/8/2024, ອູແກຣນ ໄດ້ເຂົ້າໂຈມຕີແຂວງຄຸດສ (Kursk) ແລະ Belgorod ຂອງຣັດເຊຍ ຢ່າງຮຸນແຮງ, ຊຶ່ງທາງການຣັດເຊຍ ໄດ້ກ່າວປະນາມ ວ່າເປັນການກໍ່ການຮ້າຍຢ່າງໂຈ່ງແຈ້ງ. ເພື່ອຫຼີກລ່ຽງການໂຈມຕີຖືກປະຊາຊົນ, ຣັດເຊຍ ໄດ້ອົບພະຍົບປະຊາຊົນອອກຈາກສອງແຂວງດັ່ງກ່າວ ຫຼາຍກວ່າ 2 ແສນຄົນ; ຣັດເຊຍ ໄດ້ຕອບໂຕ້ ສາມາດສັງຫານທະຫານອູແກຣນໄດ້ 4,700 ຄົນ, ທໍາລາຍບັນດາລົດຫຸ້ມເກາະ, ເຄື່ອງບິນ, ໂດຣນ ຂອງອູແກຣນ ໄດ້ 500 ກວ່າລາຍການ, ໂຈມຕີຖານທີ່ໝັ້ນທະຫານຂອງອູແກຣນ ແລະ ທະຫານອູແກຣນ 22 ຄົນ ຍອມຈໍານົນ ໃນແຂວງຄຸດສ, ພ້ອມທັງໄດ້ຈັດຕັ້ງ 3 ກໍາລັງໃໝ່ ເພື່ອປົກປ້ອງ ແລະ ຂັບໄລ່ທະຫານອູແກຣນ ອອກຈາກແຂວງ Kursk, Belgorod ແລະ Bryansk ຂອງຣັດເຊຍ. ຣັດເຊຍ ຍັງສາມາດຍຶດໄດ້ຫຼາຍບ້ານເພີ່ມຕື່ມ ໃນພາກຕາເວັນອອກຂອງອູແກຣນ; ຍິງໂດຣນອູແກຣນຕົກ 11 ລໍາ ທີ່ຈະໂຈມຕີນະຄອນຫຼວງມົດສະກູຂອງຣັດເຊຍ. ສ່ວນ ອູແກຣນ ໄດ້ອ້າງວ່າ ສາມາດຄວບຄຸມ 74 ບ້ານ ກວມ 1-2 ກິໂລແມັດ, ຈັບກຸມທະຫານຣັດເຊຍໄດ້ 100 ຄົນ ນັບແຕ່ວັນທີ 14/8/2024 ເປັນຕົ້ນມາ. ສໍາລັບການເຈລະຈາເພື່ອຢຸດຕິຄວາມຂັດແຍ່ງລະຫວ່າງອູແກຣນ ແລະ ຣັດເຊຍ ໃນໄລຍະນີ້ ແມ່ນເປັນໄປໄດ້ຍາກ ພາຍຫຼັງ ທ່ານ Dmitry Medvedev, ຮອງ

ປະທານສະພາຄວາມໝັ້ນຄົງຣັດເຊຍ ໄດ້ກ່າວວ່າ ການໂຈມຕີແຄວ້ນຄຸດສຂອງຣັດເຊຍ ເຮັດໃຫ້ການຕັດສິນໃຈຂອງຣັດເຊຍງ່າຍຂຶ້ນ ແລະ ຈະບໍ່ມີການເຈລະຈາໃດໆກັບຢູແກຣນ.

- **ປະທານາທິບໍດີຣັດເຊຍຢ້ຽມຢາມອາແຊກໄບຊານ**: ໃນລະຫວ່າງວັນທີ 18-19 ສິງຫາ 2024, ທ່ານ ວະລາດີເມຍ ປູຕິນ, ປະທານາທິບໍດີຣັດເຊຍ ໄດ້ຢ້ຽມຢາມລັດຖະກິດຢູ່ ສ.ອາແຊກໄບຊານ ແລະ ໄດ້ພົບປະກັບ ທ່ານ ອິວຮາມ ອາລີເຢັບ (Ilham Aliyev), ປະທານາທິບໍດີ ອາແຊັກໄບຊານ ເພື່ອປຶກສາຫາລືກ່ຽວກັບ ການພັດທະນາສາຍພົວພັນ ລະຫວ່າງ ຣັດເຊຍ ແລະ ອາແຊກໄບຊານ ກໍຄືການພັດທະນາເປັນຄູ່ຮ່ວມມືຍຸດທະສາດລະຫວ່າງສອງປະເທດ , ພ້ອມທັງໄດ້ແລກປ່ຽນທັດສະນະຕໍ່ບັນຫາພາກພື້ນ ແລະ ສາກົນ; ສອງຝ່າຍ ຍັງໄດ້ລົງນາມໃນສັນຍາຮ່ວມມືຫຼາຍສະບັບ ໃນຂົງເຂດເສດຖະກິດ, ການຄ້າ ແລະ ພະລັງງານ. ທ່ານ ປູ ຕິນ ຍັງໃຫ້ຄໍາ ໝັ້ນສັນຍາ ຈະສືບຕໍ່ເປັນຂົວຕໍ່ ແລະ ສະໜັບສະໜູນການພົວພັນລະຫວ່າງ ອາແຊກໄບຊານ ແລະ ອາກເມນີ ໃຫ້ເປັນປົກກະຕິ, ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດ ສົນທິສັນຍາສັນຕິພາບ ອາແຊກໄບຊານ ແລະ ອາກເມນີ ທີ່ໄດ້ລົງນາມຮ່ວມກັນ 3 ຝ່າຍໃນປີ 2020 ແລະ 2022 ຜ່ານມາ ໃຫ້ສໍາເລັດ ເພື່ອເປັນການເປີດເສັ້ນທາງການຄ້າຂ້າມຊາຍແດນ Caucasus (ທີ່ກວມເອົາ ອາແຊກໄບຊານ, ອາກເມນີ, ຊອກດານີ ແລະ ພາກໃຕ້ຂອງຣັດເຊຍ).

- **ການເມືອງອາເມຣິກາ:** ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດພັກເດໂມແຄຣດອາເມຣິກາໄດ້ໄຂຂຶ້ນ ວັນທີ 19-22/8/2024 ຢູ່ນະຄອນຊິກາໂກ, ອາເມຣິກາ. ທ່ານ ນາງ kamala Harris ແລະ ທ່ານ Tim Walz ໄດ້ຮັບເລືອກເປັນຜູ້ສະໝັກຮັບເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີອາເມຣິກາຂອງພັກເດໂມແຄຣດຢ່າງເປັນທາງການ. ທ່ານ ນາງ kamala Harris ໄດ້ເລີ່ມໂຄສະນາຫາສຽງ, ເນັ້ນນະໂຍບາຍບໍ່ຂຶ້ນພາສີລາຄາສິນຄ້າທົ່ວອາເມຣິກາ ແລະ ຈະໃຫ້ງົບປະມານ 1,7 ພັນຕື້ໂດລາສະຫະລັດ ເພື່ອຊ່ວຍປະຊາຊົນຟື້ນຟູສະພາບຄອບຄົວ ກໍຄືເພື່ອຟື້ນຟູເສດຖະກິດອາເມຣິກາ. ສ່ວນ ທ່ານ Trump, ຈາກພັກຣີພັບບລີກັນ ກໍໄດ້ໂຄສະນາຫາສຽງ ໂດຍເນັ້ນນະໂຍບາຍເຂັ້ມງວດເລື່ອງຄົນເຂົ້າເມືອງ ແລະ ການສ້າງອາເມຣິກາ ໃຫ້ກັບມາຍິ່ງໃຫຍ່ອີກຄັ້ງ. ຕາມຜົນສໍາຫຼວດຂອງສໍານັກຂ່າວ ABC, Washington Post ທີ່ເຜີຍແຜ່ໃນວັນທີ 18/8/2024 ໃຫ້ຮູ້ວ່າ ມີຜູ້ສະໜັບສະໜູນທ່ານ ນາງ kamala Harris 49%; ທ່ານ Trump 45%. ການໂຕ້ວາທີ ສໍາລັບຜູ້ລົງສະໝັກປະທານາທິບໍດີ 2 ທ່ານດັ່ງກ່າວຈະຈັດຂຶ້ນໃນວັນທີ 10/9/2024.

### 3. ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ

ສະຖານະການຕາເວັນອອກກາງໄດ້ທະວີຄວາມຮຸນແຮງຂຶ້ນ ພາຍຫຼັງ ທ່ານ Ismail Haniyeh, ຫົວໜ້າກຸ່ມ ຮາມາສ ຖືກລອບສັງຫານໃນຂະນະໄປຮ່ວມພິທີສາບານຕົນຮັບຕໍາແໜ່ງປະນາທິບໍດີອີຣານ ວັນທີ 31/7/2024 ຜ່ານມາ ແລະ ຫົວໜ້າກຸ່ມຮິດບອນເລາະ ຖືກສັງຫານໃນນະຄອນຫຼວງ Beirut ຂອງລີບັງ ໃນວັນດຽວກັນ. ອິດສະຣາແອນໄດ້ໂຈມຕີ ຖານທີ່ໝັ້ນຂອງກຸ່ມຮິດບອນເລາະ ໃນພາກໃຕ້ຂອງລີບັງ ພາຍຫຼັງກຸ່ມຮິດບອນເລາະ ໄດ້ສົ່ງໂດຣນໂຈມຕີພາກເໜືອອິດສະຣາແອນຄັ້ງໃຫຍ່ ເຮັດໃຫ້ເກີດໄຟໄໝ້ຢ່າງຮຸນແຮງ ແລະ ຖານທັບຂອງອິດສະຣາແອນ 2 ແຫ່ງ ໄດ້ຮັບຄວາມເສຍຫາຍ. ວັນທີ 6/8/2024, ມີທະຫານອາເມຣິກາ ບາດເຈັບ 5 ຄົນ ຈາກການໂຈມຕີຖານທັບອາກາດ al Asad ຂອງອາເມລິກາທີ່ຕັ້ງຢູ່ພາກຕາເວັນຕົກຂອງອີຣັກ; ກຸ່ມຮູຕີ ສືບຕໍ່ໂຈມຕີເຮືອອາເມຣິກາ, ເຮືອອິດສະຣາແອນ ແລະ ພັນທະມິດໃນທະເລແດງ. ຕໍ່ສະຖານະການທີ່ເກີດຂຶ້ນ, ຫຼາຍປະເທດ ເປັນຕົ້ນ ຕວັກກີ, ຍີ່ປຸ່ນ, ອັງກິດ, ຝຣັ່ງ, ສ.ອາເມຣິກາ ແລະ ອິດສະຕາລີ ໄດ້ສັ່ງໃຫ້ພົນລະເມືອງຂອງຕົນອອກຈາກລີບັງ, ນອກນັ້ນ, ສາຍການບິນ US Airline ໄດ້ຢຸດຖ້ຽວບິນຈາກນິວຢອກ ຫາ ເມືອງ Tel Aviv ຈົນເຖິງວັນທີ 31/8/2024, ສ່ວນສາຍການບິນ Lufthansa ຂອງເຢຍລະມັນ ກໍໄດ້ໂຈະຖ້ຽວບິນໄປອິດສະຣາແອນ, ອີຣານ ແລະ ລີບັງ ຮອດວັນທີ 12 ສິງຫາ 2024.

ສໍາລັບເຂດກາຊາ ສືບຕໍ່ມີການໂຈມຕີຢ່າງໜັກຈາກອິດສະຣາແອນ ວັນທີ 10/8/2024, ອິດສະຣາແອນ ໄດ້ຖິ້ມລະເບີດໃສ່ໂຮງຮຽນ ແຫ່ງໜຶ່ງໃນເຂດກາຊາ ເຮັດໃຫ້ມີຜູ້ເສຍຊີວິດຫລາຍກວ່າ 100 ຄົນ, ຊຶ່ງເປັນຄັ້ງທີ 5 ແລະ ເຮັດໃຫ້ຜູ້ມີເສຍຊີວິດຫຼາຍຢ່າງຫຼວງຫຼາຍ. ປະຊາຄົມໂລກ ອອກມາປະນາມການກະທໍາຂອງອິດສະຣາແອນ ເປັນຕົ້ນ ການາດາ, ສ.ອາເມຣິກາ, ປາແລັດສະຕິນ, ອົງການສະຫະປະຊາຊາດ ເພື່ອສິດທິມະນຸດ ແລະ ອົງກອນການກຸສົນຕ່າງໆ. ວັນທີ

16/8/2024, ປະຊາຊົນອິດສະຣາແອນ ແລະ ປາແລັດສະຕິນ ໄດ້ປະທະກັນໃນເຂດ ເວສແບັງ ພາຍຫຼັງທາງການອິດສະຣາແອນ ໄດ້ເລີ່ມສ້າງສິ່ງປຸກສ້າງຕ່າງໆ ໃສ່ເຂດດັ່ງກ່າວ ທີ່ຍັງເປັນຄວາມຂັດແຍ່ງລະຫວ່າງສອງຝ່າຍ ເຮັດໃຫ້ຝ່າຍປາແລັດສະຕິນເສຍຊີວິດ 1 ຄົນ. ສ່ວນການເຈລະຈາການຢຸດຍິງຢູ່ເຂດກາຊາ ລະຫວ່າງອິດສະຣາແອນ ແລະ ກຸ່ມຮາມາສ ທີ່ຈັດຂຶ້ນທີ່ເອຢິບໃນວັນທີ 21-22/8/2024 ແມ່ນບໍ່ມີຄວາມຄືບໜ້າໃດໆ ຍ້ອນຕ່າງຝ່າຍ ຕ່າງບໍ່ຍອມຮັບຂໍ້ສະເໜີຂອງກັນແລະກັນໄດ້. ຂະນະທີ່ ປະຊາຊົນຫຼາຍພັນຄົນໃນເມືອງ Tel Aviv ແລະ ເມືອງອື່ນໆທົ່ວອິດສະຣາແອນ ໄດ້ຊຸມນຸມປະທ້ວງ ຮຽກຮ້ອງໃຫ້ນາຍົກລັດຖະມົນຕີອິດສະຣາແອນ ຕົກລົງຢຸດຍິງໃນເຂດກາຊາ, ທວງຕົວປະກັນອິດສະຣາແອນ ຈາກກຸ່ມຮາມາສ ໂດຍໄວ. ສ່ວນ ທາງການອີຣານ ໄດ້ກ່າວວ່າ ຂໍ້ຕົກລົງຢຸດຍິງໃນເຂດກາຊາເທົ່ານັ້ນ ທີ່ຈະຢຸດຢັ້ງບໍ່ໃຫ້ອີຣານ ຕອບໂຕ້ອິດສະຣາແອນໂດຍກົງ ຕໍ່ການລອບສັງຫານຜູ້ນຳກຸ່ມຮາມາສ ໃນດິນແດນຂອງອີຣານ ໃນເດືອນກໍລະກົດຜ່ານມາ.

ວັນທີ 13/8/2024, ອາເມຣິກາ ໄດ້ອະນຸມັດການຂາຍອາວຸດໃຫ້ອິດສະຣາແອນ 20 ຕື້ໂດລາສະຫະລັດ ລວມມີເຮືອບິນ F-15, ຈຳນວນ 50 ລຳ, ລູກສອນໄຟໄລຍະກາງ, ລູກປືນໃຫຍ່ 120 ມມ ແລະ ລົດຍຸດໂທປະກອນອື່ນໆ. ອາເມຣິກາ ຍັງຂາຍອາວຸດໃຫ້ ຊາອຸດິດອາຣາບີ ຄືນໃໝ່ ພາຍຫຼັງໄດ້ຍົກເລີກໄປ 3 ປີກ່ອນ.

## II.ການເຄື່ອນໄຫວຂອງ ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກ

**1) ພິທີລົງນາມບົດບັນທຶກຄວາມເຂົ້າໃຈລະຫວ່າງຄະນະພົວພັນຕ່າງປະເທດສູນກາງພັກ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ.**



ວັນທີ 15/8/2024, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ທ່ານ ບັນດິດ ສຈ. ບໍ່ວຽງຄຳ ວົງດາລາ, ກຳມະການສູນກາງພັກ, ລັດຖະມົນຕີກະຊວງເຕັກໂນໂລຊີແລະການສື່ສານ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືຫັນວຽກງານຂອງຄະນະພົວພັນຕ່າງປະເທດສູນກາງພັກເປັນດີຈີຕອນລະຫວ່າງຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ (ກຕສ), ເພື່ອເພີ່ມທະວີການຮ່ວມມື, ເປັນກົນໄກປະສານງານ, ແລກປ່ຽນຂໍ້ມູນຂ່າວສານ, ພັດທະນາຂີດຄວາມສາມາດໃນການຫັນເປັນດີຈີຕອນທາງດ້ານຂໍ້ມູນຂ່າວສານກ່ຽວກັບການຄຸ້ມຄອງ ແລະ ບໍລິຫານລັດ, ເຜີຍແຜ່ຂໍ້ມູນຂ່າວສານການເຄື່ອນໄຫວວຽກງານຕ່າງປະເທດດ້ານພັກ ແລະ ການທູດປະຊາຊົນຂອງຄະນະພົວພັນຕ່າງປະເທດສູນກາງພັກຢູ່ພາຍໃນປະເທດ ແລະ ຕ່າງປະເທດ, ເຊື່ອມໂຍງລະບົບຂໍ້ມູນຂ່າວສານກັບບັນດາຂະແໜງການກ່ຽວຂ້ອງ ແຕ່ສູນກາງຮອດທ້ອງຖິ່ນໄດ້ຢ່າງວ່ອງໄວ, ທັນສະໄໝ ແລະ ມີຄວາມປອດໄພ ໂດຍການສະໜັບສະໜູນການຫັນເປັນທັນສະໄໝໃນວຽກງານຄຸ້ມຄອງແລະບໍລິຫານລັດຂອງ ຄຕພ; ໃຫ້ຄຳປຶກສາ, ຊ່ວຍສ້າງຖານຂໍ້ມູນພະນັກງານດ້ວຍລະບົບດີຈີຕອນ ແລະ ຮັບປະກັນຄວາມປອດໄພທາງໄຊເບີ; ຊ່ວຍປະເມີນຄວາມຕ້ອງການທາງດ້ານອຸປະກອນ IT ທີ່ຈຳເປັນ; ຊ່ວຍບຳລຸງກໍ່ສ້າງພະນັກງານ ແລະ ພັດທະນາລະບົບດີຈີຕອນຂອງ ຄຕພ.

2) **ທ່ານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຍີ່ປຸ່ນ ປະຈຳ ສປປ ລາວ ຄົນໃໝ່**



ວັນທີ 29/7/2024, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ໂຄອິຊຶມິ ຊຶໂຕມຸ (Tsutomu Koizumi), ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງຍີ່ປຸ່ນ ປະຈຳ ສປປ ລາວ ຄົນໃໝ່. ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຊົມເຊີຍ ພ້ອມໄດ້ແຈ້ງສະພາບພົ້ນເດັ່ນຂອງ ພັກ-ລັດລາວ ໃຫ້ທ່ານທູດຊາບ ແລະ ສະແດງຄວາມຂອບໃຈໃນການຊ່ວຍເຫຼືອຂອງຍີ່ປຸ່ນໃນໄລຍະຜ່ານມາ; ຍິນດີຮ່ວມກັບ ທ່ານທູດຍີ່ປຸ່ນ ໃນການຊຸກຍູ້ການພົວພັນຮ່ວມມື ລະຫວ່າງ ພັກ ປປ ລາວ ແລະ ບັນດາພັກການເມືອງໃນຍີ່ປຸ່ນ, ປະກອບສ່ວນສ້າງສາຍພົວພັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສອງປະເທດ ລາວ-ຍີ່ປຸ່ນ ແລະ ປະຊາຊົນສອງຊາດ ລາວ-ຍີ່ປຸ່ນ ໃຫ້ມີບາດກ້າວຂະຫຍາຍຕົວໃໝ່. ທ່ານ ໂຄອິຊຶມິ ຊຶໂຕມຸ, ໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການພົວພັນຄູ່ຮ່ວມຍຸດທະສາດ ຍີ່ປຸ່ນ-ລາວ ແລະ ໃຫ້ຄຳໝັ້ນສັນຍາຈະເຮັດສຸດຄວາມສາມາດຂອງຕົນ ໃນການສືບຕໍ່ເສີມຂະຫຍາຍ ແລະ ຮັດແໜ້ນການພົວພັນຮ່ວມມື ຍີ່ປຸ່ນ-ລາວ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຍິນດີສືບຕໍ່ເຮັດວຽກຮ່ວມກັບພາກສ່ວນຕ່າງໆຂອງ ສປປ ລາວ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນຮ່ວມມືທີ່ດີ ລະຫວ່າງ ສອງປະເທດ ຍີ່ປຸ່ນ-ລາວ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ.

3) **ຄະນະຜູ້ແທນພັກ ປປ ລາວ ສຳເລັດການເຂົ້າຮ່ວມກອງປະຊຸມອົງການແມ່ຍິງໄອແຄັບ ຄັ້ງທີ 8**




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ຜູ້ຕາງໜ້າຈາກສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳປະເທດມົງໂກລີ ໄດ້ເຂົ້າຮ່ວມກອງປະຊຸມແມ່ຍິງຂອງອົງການກອງປະຊຸມສາກົນຂອງບັນດາພັກການເມືອງໃນອາຊີ

ຫຼື ໄອແຄັບ ຄັ້ງທີ 8 (The 8th Meeting of the ICAPP Women’s Wing) ພາຍໃຕ້ຫົວຂໍ້ “ການສົ່ງເສີມຄວາມກ້າວໜ້າແມ່ຍິງ ຢູ່ອາຊີ-ປາຊີຟິກ” (Empowering Women in the Asia Pacific), ຈັດຂຶ້ນຢູ່ນະຄອນຫຼວງອູລານບາຕໍ, ປະເທດມົງໂກລີ ໃນລະຫວ່າງວັນທີ 17-20 ສິງຫາ 2024 ໂດຍມີຄະນະຜູ້ແທນເຂົ້າຮ່ວມທັງໝົດ ຈາກ 14 ພັກການເມືອງ ທີ່ມາຈາກ 13 ປະເທດ.

ກອງປະຊຸມ ໄດ້ປຶກສາຫາລືກັນ ກ່ຽວກັບ ການສົ່ງເສີມບົດບາດ ແລະ ການມີສ່ວນຮ່ວມຂອງແມ່ຍິງໃນການນຳພາໃນຂະແໜງການຕ່າງໆ; ວິທີການການແກ້ໄຂຂໍ້ຈຳກັດ ແລະ ສິ່ງທ້າທ້າຍຕ່າງໆຕໍ່ກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ; ການເສີມຂະຫຍາຍການຮ່ວມມືໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນ ລະຫວ່າງ ບັນດາການນຳເພດຍິງ ແລະ ອົງການຈັດຕັ້ງ; ຍົກໃຫ້ເຫັນຄວາມສຳຄັນໃນການສົ່ງເສີມບົດບາດຂອງແມ່ຍິງ ຜ່ານການສະໜັບສະໜູນບັນດາໂຄງການ ແລະ ກິດຈະກຳຕ່າງໆ ເພື່ອສ້າງເງື່ອນໄຂເອື້ອອຳນວຍໃຫ້ເພດຍິງມີສ່ວນຮ່ວມ ໂດຍປາສະຈາກຂໍ້ຈຳກັດ ແລະ ການເລືອກປະຕິບັດ. ໃນໂອກາດນີ້, ຕາງໜ້າຄະນະຜູ້ແທນ ພັກ ປປ ລາວ ໄດ້ຕີລາຄາສູງ ແລະ ຊົມເຊີຍຕໍ່ການເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວຂອງພັກປະຊາຊົນມົງໂກລີ; ຍົກໃຫ້ເຫັນຄວາມສຳຄັນໃນການເອົາໃຈໃສ່ ຕໍ່ແມ່ຍິງ ແລະ ເດັກຍິງ ເພື່ອຮັບປະກັນໃຫ້ແມ່ຍິງໄດ້ມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ມີປະສິດທິພາບ, ປະສິດທິຜົນສູງ ໃນທຸກຂົງເຂດວຽກງານ; ສ້າງເງື່ອນໄຂໃຫ້ແມ່ຍິງ ໄດ້ຮັບໂອກາດເທົ່າທຽມກັບເພດຊາຍໃນທຸກດ້ານ, ສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ. ພັກ ປປ ລາວ ໄດ້ໃຫ້ຄວາມສຳຄັນຢ່າງຍິ່ງໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ; ສົ່ງເສີມ ແລະ ຊຸກຍູ້ເງື່ອນໄຂໃຫ້ແມ່ຍິງໄດ້ບັນຈຸຊັບຊ້ອນເຂົ້າໃນຂັ້ນນຳພາ ແລະ ບໍລິຫານໃນທຸກຂັ້ນ ໃຫ້ກວມເອົາຫຼາຍກວ່າ 20% ແລະ ເຂົ້າເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ກວມ 30% ຂຶ້ນໄປ.

## 4. ຮອງຫົວໜ້າ ຄຕພ ຕ້ອນຮັບຄະນະຜູ້ແທນຈາກກອງພົນນ້ອຍ 95, ສສ ຫວຽດນາມ



ວັນທີ 26 ສິງຫາ 2024, ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ສະຫາຍ ຫງວຽນ ມິງ ຈຽນ, ກຳມະການຄະນະບໍລິຫານງານສະມາຄົມມິດຕະພາບ ຫວຽດນາມ-ລາວ, ຮອງປະທານຜູ້ປະຈຳການ ຄະນະປະສານງານກອງພົນນ້ອຍ 95, ອະດີດທະຫານອາສາສະໝັກ ແລະ ຊ່ຽວຊານທະຫານຫວຽດນາມ ຊ່ວຍເຫຼືອລາວ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ລະຫວ່າງວັນທີ 22-27/08/2024 ເພື່ອເກັບກຳຂໍ້ມູນກ່ຽວກັບ

ການປະສານສົມທົບ ລະຫວ່າງກອງ CP35 ຂອງຫວຽດນາມ (ກອງພົນນ້ອຍ 95 ໃນປັດຈຸບັນ) ແລະ ກອງ CP35 ຂອງລາວ ໄລຍະປີ 1954-1976 ເພື່ອປະກອບເຂົ້າໃນການຂຽນປຶ້ມ ປະຫວັດສາດແຫ່ງການສ້າງຕັ້ງ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງ ກອງພົນນ້ອຍ 95 ວິລະຊົນ. ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຍິນດີຕ້ອນຮັບຄະນະທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ລາວໃນຄັ້ງນີ້, ພ້ອມຈະໃຫ້ການຮ່ວມມື ແລະ ປະສານງານ ເພື່ອໃຫ້ວຽກເກັບກຳຂໍ້ມູນດັ່ງກ່າວ ສຳເລັດຕາມຄາດໝາຍ.